## <u>ຄຳອະທິບາຍໃນການຕອບຄຳຖາມ</u>

**<u>ລາຍການທີ 4</u>: ສະພາບການຖືບັນຊີຂອງບໍລິສັດ**

- **ລະບົບຂະຫຍາຍຕົວ,** ຊຶ່ງປະກອບດ້ວຍໃບສະຫລຸບຊັບສິນບັດ ພ້ອມດ້ວຍໃບຄິດໄລ່ ກ່ຽວກັບ ລະດັບຖານະການເງິນ, ໃບລາຍງານຜົນໄດ້ຮັບ ພ້ອມດ້ວຍໃບລາຍງານບັນດາຜົນຕາມຂັ້ນຕອນ ແລະຂໍ້ມູນຊີ້ບອກສະພາບ ການຄຸ້ມຄອງ, ບັນດາຕາຕະລາງວິໃຈການປະກອບ ທຶນ ແລະຄັງເງິນ ລວມ ໃນປີ, ໃບລາຍງານສະຖິຕິ , ອາກອນ, ໃບລາຍງານການ ວິໃຈເພີ້ມເຕີມ ກ່ຽວກັບຕົ້ນທຶນຕາມໜ່ວຍ ຮັບຜິດຊອບງານ ແລະຕາມຜະລິດຕະພັນ ຫລື ຕາມ ການບໍລິການ.

- **ລະບົບທຳມະດາ,** ຊຶ່ງປະກອບດ້ວຍໃບສະຫລຸບຊັບສິນບັດ ພ້ອມດ້ວຍໃບຄິດໄລ່ກ່ຽວກັບ ລະດັບ ຖານະການເງິນ, ໃບລາຍງານຜົນໄດ້ຮັບ ພ້ອມດ້ວຍໃບລາຍງານບັນດາຜົນຕາມຂັ້ນ ຕອນ ແລະຂໍ້ມູນ ຊີ້ບອກສະພາບ ການຄຸ້ມ ຄອງ, ບັນດາຕາຕະລາງວິໃຈການປະກອບທຶນ ແລະຄັງເງິນລວມໃນປີ, ໃບລາຍງານສະຖິຕິ ແລະອາກອນ.

- **ລະບົບແບບປະຖົມພື້ນຖານ,** ຊຶ່ງປະກອບມີໃບລາຍງານກ່ຽວກັບລາຍໄດ້ຈາກທຸລະກິດ ແລະ ຄ່າໃຊ້ຈ່າຍໃນດ້ານທຸລະກິດພ້ອມ ສະຫລຸບຜົນໄດ້ຮັບໃນປີ : ກຳໄລ ຫລືຂາດທຶນ.

**<u>ລາຍການທີ 5</u>: ຈຳນວນພະນັກງານ**

- **ພະນັກງານຖາວອນ** ທີ່ມີໜ້າທີ່ ແລະເຮັດວຽກຢ່າງເປັນປະຈຳຢູ່ໃນຫົວໜ່ວຍ ວິສາຫະກິດຕ່າງໆ ໂດຍມີຄ່າຕອບແທນແຮງງານ ດ້ວຍເງິນເດືອນ, ຄ່າສະຫວັດດີການສັງຄົມຕ່າງໆ ຈາກງົບປະມານຂອງຫົວຫນ່ວຍວິສາຫະກິດ. ພະນັກງານດັ່ງກ່າວນີ້ປະກອບມີ **<u>ພະນັກງານຜລິດໂດຍກົງ</u>** (ຜູ້ອອກແຮງງານເຂົ້າໃນການຜະ ລິດໂດຍກົງ) ແລະ **<u>ພະນັກງານຜູ້ຜະລິດທາງອ້ອມ</u>** ( ພະນັກງານຄຸ້ມຄອງເສດຖະກິດ ແມ່ນຜູ້ເຮັດວຽກງານຊີ້ນຳ, ຄຸ້ມຄອງການຜະລິດ)
- **ພະນັກງານເບັ້ຍມື້ສັນຍາຈ້າງ** ແມ່ນຈຳນວນແຮງງານ ທີ່ຖືກນຳໃຊ້ ໃນຊ່ວງເວລາສັ້ນ ຫລືຍາວ ດ້ວຍຮູບການທີ່ມີລັກສະນະຊົ່ວຄາວ ແລະໄດ້ຮັບຄ່າຕອບແທນແຮງງານ ຕາມສັນຍາວ່າຈ້າງ ຫຼື ການຕົກລົງກັນ ກັບເຈົ້າຂອງກິດຈະການ ຫຼື ນາຍຈ້າງ.
- **ພະນັກງານທີ່ບໍ່ໄດ້ຮັບຄ່າຈ້າງ** ລວມມີ ເຈົ້າຂອງກິດຈະການ ແລະ ສະມາຊິກຄອບຄົວ, ພີ່ນ້ອງທີ່ເຮັດວຽກຊ່ວຍກິດຈະການດັ່ງກ່າວອາດເປັນບາງຄັ້ງຄາວ ໂດຍບໍ່ໄດ້ຮັບຄ່າແຮງງານ ຫຼື ເງິນເດືອນ.

## <u>ຄຳອະທິບາຍໃນການຕອບຄຳຖາມ</u>

**<u>ລາຍການທີ 6</u>: ລວມຍອດຂາຍ ຫລື ຈຳໜ່າຍ ຂອງ ວິສາຫະກິດ ຫຼື ຫົວໜ່ວຍທຸລະກິດ**

ກິດຈະກຳຕົ້ນຕໍ: (ບັນຊີ 71, 72)

- ສິນຄ້າຊື້ມາຂາຍ
- ສິ່ງຜະລິດຂຶ້ນ
  - *a.* ສິນຄ້າ
  - *b.* ບໍລິການ
  - *c.* ໜ້າວຽກທີ່ເຮັດສຳເລັດ

ກິດຈະກຳສຳຮອງ: (ບັນຊີ 73)

- *ຮັບຈາກການໃຫ້ເຊົ່າຊັບສິນເຊັ່ນ: ທີ່ດິນ, ສິດນຳໃຊ້, ຊັບໃນດິນ*
- *ຮັບຈາກການໃຫ້ເຊົ່າຕຶກອາຄານ ແລະເຄື່ອງມື*
- *ຮັບສຸດທິຈາກການຂາຍຊັບສິນນອກການເງິນ*

**<u>ລາຍຮັບອື່ນໆ</u>:**

- ລາຍຮັບອື່ນໆຈາກການຄຸ້ມຄອງປົກກະຕິ (ບັນຊີ 75)
- ລາຍຮັບການເງິນ (ບັນຊີ 76)
- ລາຍຮັບບັງເອີນ (ບັນຊີ 77)
- ເກັບຄ່າຫຼຸ້ຍຫ້ຽນ, ຄ່າເຊື່ອມມູນຄ່າ ແລະເງິນແຮເພື່ອຈ່າຍ (ບັນຊີ 78)

**<u>ລາຍການທີ 7</u>: ລາຍຈ່າຍ ໃນການດຳເນີນທຸລະກິດ**

<u>ການທົດແທນຄ່າແຮງງານ</u>

1. ເງິນເດືອນ ແລະ ຄ່າແຮງງານ (ບັນຊີ 641)
   - ສຳລັບພະນັກງານຖາວອນ
   - ສຳລັບພະນັກງານເບັຍມື້ສັນຍາຈ້າງ
2. ເງິນບຳເນັດ ແລະ ຍ້ອງຍໍ (ບັນຊີ 642)
3. ນະໂຍບາຍອື່ນໆ (ບັນຊີ 643)
4. ຜົນປະໂຫຍດດ້ານວັດຖຸ (ບັນຊີ 644)
5. ລາຍຈ່າຍປະກັນສັງຄົມ (ບັນຊີ 647)
6. ລາຍຈ່າຍສະຫວັດດີການລວມໝູ່ (ບັນຊີ 648)

<u>ລາຍຈ່າຍທຸລະກິດ:</u>

- ມູນຄ່າວັດຖຸຮັບໃຊ້ການຜະລິດ, ສິນຄ້າ, ວັດສະດຸກໍ່ສ້າງ, ແລະເຄື່ອງປະກອບອື່ນໆ (ນ້ຳມັນເຊື້ອໄຟ, ນ້ຳມັນລໍ່ລື່ນ ແລະຄ່າແບກຫາມ, ພາສີຂາເຂົ້າ) (ບັນຊີ 611, 612, 613, 614, 615, 616)
- ຈ່າຍຄ່າໄຟຟ້າ, ນ້ຳປະປາ (ບັນຊີ 6173)
- ໂທລະສັບ, ແຟກ, ອິນເຕີແນັດ (ບັນຊີ 6281, 6288)
- ຄ່າຂົນສົ່ງສິນຄ້າ (ບັນຊີ 6251, 6252, 6258)
- ຄ່າຂົນສົ່ງລວມໝູ່ ແລະ ຄ່າໃຊ້ຈ່າຍເດີນທາງ (ບັນຊີ6253, 6255)
- ຄ່າບໍລິການອື່ນໆທີ່ກ່ຽວພັນກັບການຜະລິດ (ຄ່າໂຄສະນາ, ປະກັນໄພ(ບໍ່ລວມເອົາປະກັນຊີວິດ), ຄ່າຝາກສາງ) (ບັນຊີ 621, 623, 624, 626, 627)
- ການບຳລຸງຮັກສາ ແລະຄ່າສ້ອມແປງນ້ອຍ ( ບັນຊີ 622)

**<u>ຄຳອະທິບາຍໃນການຕອບຄຳຖາມ</u>**

- **ຈ່າຍຄ່າຫລຸ້ຍຫ້ຽນຊັບສິນບັດຄົງທີ່** *ຄ່າເຊື່ອມຄຸນຂອງອາຄານໂຮງງານ, ເຄື່ອງມື ແລະເຄື່ອງໃຊ້ຫ້ອງການ* (ບັນຊີ 682)
- ຄ່າສັນຍາຍ່ອຍ/ຈ່າຍຄ່າຮັບເໝົາ/ຈ້າງຜູ້ອື່ນເຮັດແທນ (ບັນຊີ 6182)
- ຄ່າດອກເບັ້ຍເງິນກູ້ (ບັນຊີ 661)
- ຄ່າເຊົ່າທີ່ດິນ/ສຳປະທານທີ່ດິນ ແລະຊັບໃນດິນ
- ຄ່າພາສີອາກອນ ແລະຄ່າທຳນຽມ (ບັນຊີ 631, 632,635,637,638)
- ອາກອນກຳໄລ (ບັນຊີ 69)
- ລາຍຈ່າຍອື່ນໆໃນການຄຸ້ມຄອງປົກກະຕິ (ບັນຊີ 65)
- ລາຍຈ່າຍບັງເອີນ (ບັນຊີ 67)
- .ການປະກອບສ່ວນໃຫ້ແກ່ອົງການຈັດຕັ້ງສັງຄົມ ແລະອື່ນໆ (ບັນຊີ 6266)

**<u>ລາຍການທີ 8</u>: <u>ການຊື້ ແລະຂາຍຊັບສິນບັດຄົງທີ່</u>**

**8.ກ. <u>ການຊື້ຊັບສິນບັດຄົງທີ່</u>**

ການໃຊ້ຈ່າຍໃນການລົງທຶນແມ່ນໃຫ້ຈົດກ່າຍການໃຊ້ຈ່າຍຕົວຈິງໃນປີ 2003 ເພື່ອ ກໍ່ສ້າງອາຄານໃໝ່, ຊື້ ອາຄານໃໝ່ ແລະຊື້ອາຄານເກົ່າທີ່ໃຊ້ແລ້ວ ຫລືຊື້ເຄື່ອງຈັກ, ອຸປະກອນ, ພາຫານະຂົນສິ່ງຕ່າງໆ ແລະ ເຄື່ອງໃຊ້ຫ້ອງການ ທີ່ມີອາຍຸການນຳໃຊ້ຫຼາຍກວ່າ 1 ປີ. ພ້ອມກັນນັ້ນຕ້ອງຂຽນຈຳນວນ ປີທີ່ຄາດຫວັງວ່າຈະໄດ້ນຳໃຊ້ງານດົນປານໃດ *(ສະເພາະທີ່ດິນແມ່ນບໍ່ໃຫ້ໝາຍໄລຍະການໃຊ້ງານ).*

**8.ຂ. <u>ການຂາຍຊັບສິນບັດຄົງທີ່</u>**

ແມ່ນການຂາຍຊັບສິນບັດຄົງທີ່ ທີ່ນຳໃຊ້ແລ້ວອອກ ເພື່ອຫຼຸດຜ່ອນ ຕົ້ນທຶນການຜະລິດ ຂອງວິສາຫະກິດ ຫຼື ຫົວໜ່ວຍທຸລະກິດ.

**<u>ລາຍການທີ 9</u>: ສິນຄ້າ/ ເຄື່ອງຄ້າງສາງ**

ສິນຄ້າ ແລະ ເຄື່ອງຄ້າງສາງ *ແມ່ນສິນຄ້າທີ່ຂາຍບໍ່ໝົດ ຫຼື ວັດຖຸດິບທີ່ໃຊ້ບໍ່ໝົດ ໃນຊ່ວງໄລຍະຂອງການຜະລິດ ປີ 2003.*

ສິນຄ້າ / ເຄື່ອງໃນສາງ ແບ່ງອອກເປັນ 3 ປະເພດຄື:

1. ວັດຖຸຮັບໃຊ້ການຜະລິດ, ສິນຄ້າ, ວັດສະດຸກໍ່ສ້າງ, ແລະເຄື່ອງປະກອບອື່ນໆ*ແມ່ນສິນຄ້າ/ວັດຖຸ ທີ່ຊື້ເຂົ້າມາເພື່ອຜະລິດ ຫຼື ແປຮູບໃຫ້ເປັນ ສິນຄ້າ/ຜະລິດຕະ ພັນອື່ນ.***(ບັນຊີ 31, 32 ແລະ 35)**
2. ຜະລິດຕະພັນສຳເລັດຮູບ*ແມ່ນ ສິນຄ້າ/ຜະລິດຕະພັນທີ່ຜລິດສຳເລັດແລ້ວ ຍັງລໍຖ້າ ແຕ່ເອົາໄປ ຈໍລະຈອນ ແລະແຈກຢາຍເທົ່ານັ້ນ.* **(ບັນຊີ 34)**
3. ຜະລິດຕະພັນກຳລັງປຸງແຕ່ງ*ແມ່ນ ສິນຄ້າ/ຜະລິດຕະພັນ ທີ່ພວມປຸງແຕ່ງ ແຕ່ບໍ່ທັນສຳເລັດເທື່ອ.***(ບັນຊີ 33)**

**<u>ຄຳອະທິບາຍໃນການຕອບຄຳຖາມ</u>**

**<u>ລາຍການທີ10</u>: ໃບສະຫລຸບຊັບສິນບັດ**

ບາງນິຍາມ ກ່ຽວກັບຊັບສິນບັດ (ຕາມແບບ ການບັນຊີວິສາຫະກິດໃໝ່)

- ຊັບສິນບັດຄົງທີ່ບໍ່ມີຕົວຕົນ:
  
  ແມ່ນຊັບ ຫຼື ສິດທິ ທີ່ບໍ່ເປັນສິ່ງຂອງວັດຖຸ ເຊັ່ນ: ໃບປະກາດປະດິດສ້າງ, ໃບອະນຸຍາດ, ເຄື່ອງໝາຍ, ແບບຕົວຢ່າງ ແລະ ອື່ນໆ (ບັນຊີ 203); ສິ່ງທີ່ໃນການດຳເນີນການຄ້າ (ບັນຊີ 205)
- ຊັບສິນບັດຄົງທີ່ມີຕົວຕົນໃນການທຸຫລະກິດ:
  
  ແມ່ນສິດທິ ດ້ານກຳມະສິດ ຕໍ່ສິ່ງຂອງທີ່ແນໃສ່ຮັບໃຊ້ ການເຄື່ອນໄຫວກິດຈະການ ຂອງວິສາຫະກິດຢ່າງຍາວນານ (ກາຍນຶ່ງປີຂຶ້ນໄປ)ເຊັ່ນ: ສິ່ງປຸກສ້າງ (ບັນຊີ 212); ເຄື່ອງຈັກ ແລະ ວັດຖຸປະກອນ (ບັນຊີ 213); ພາຫະນະຂົນສົ່ງ (ບັນຊີ 214); ຊັບສິນບັດຄົງທີ່ອື່ນໆ (ບັນຊີ 218)
- ຊັບສິນບັດຄົງທີ່ມີຕົວຕົນນອກການທຸລະກິດ:
  
  ແມ່ນບັນດາຊັບສິນບັດຄົງທີ່ ເຊິ່ງຫົວໜ່ວຍທຸລະກິດເອກະລາດມີຢູ່ໃນກຳມືແຕ່ບໍ່ຈຳເປັນ ຫຼື ບໍ່ຈຳເປັນອີກແລ້ວ ສຳລັບການທຸລະກິດປົກກະຕິ (ບັນຊີ 22)
- ຊັບສິນບັດຄົງທີ່ ການເງິນປະກອບມີ: ເງິນໃຫ້ກູ້ຢືມ (ບັນຊີ 271), ເງິນວາງຄ້ຳປະກັນ ແລະ ເງິນມັດຈຳທີ່ໄດ້ຈ່າຍ (ບັນຊີ 275)
- ຊັບສິນນອກການທຸລະກິດ:
  
  ແມ່ນບັນດາໜີ້ຕ້ອງຮັບທີ່ບໍ່ພົວພັນໂດຍກົງ ກັບການທຸລະກິດ ຂອງຫົວໜ່ວຍທຸລະກິດເຊັ່ນ: ລ່ວງໜ້າອາກອນກຳໄລທີ່ໄດ້ຈ່າຍໃຫ້ລັດໃນປີ (ບັນຊີ 4641), ໜີ້ຕ້ອງຮັບຈາກການຂາຍຊັບສິນບັດຄົງທີ່ (ບັນຊີ 482)
- ຊັບສິນໃນກຳມື:

ແມ່ນພາກສ່ວນນຶ່ງຂອງບັນດາບັນຊີຄັງເງິນລວມເຊັ່ນ: ເງິນຝາກທະນາຄານ (ບັນຊີ 55), ໃບຢັ້ງຢືນການຄ້າ ຮອດກຳນົດ ແລະ ມອບຂາຍສຳລະ ຕາມອັດຕາຜ່ອນ-ແຊັກໃນຄັງ ແລະ ພວມຮຽກເກັບ (ບັນຊີ 56), ເງິນສົດ (ບັນຊີ 57)